Empowered lives.
Resilient nations.

# ບົດອອກຂ່າວ

<u>ກອງປະຊຸມທົບທວນປະຈໍາປີ</u>

“ແຜນງານສະໜັບສະໜູນໃຫ້ແກ່ ກະຊວງແຜນການ ແລະ ການລົງທຶນ ແລະ
ກະຊວງການຕ່າງປະເທດໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ **VIII**
ເພື່ອນໍາພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ, ກ້າວຂຶ້ນໄປຢູ່ໃນປະເທດທີ່ມີລາຍຮັບປານກາງ ແລະ
ບັນລຸເປົ້າໝາຍ ການພັດທະນາແບບຍືນຍົງ (2017-2021)”

*(ວັນທີ 16 ມັງກອນ 2018, ທີ່ ຫ້ອງປະຊຸມ ກະຊວງແຜນການ ແລະການລົງທຶນ, ເວລາ 08:30-12:30)*

ໃນຕອນເຊົ້າຂອງວັນທີ 16 ມັງກອນ 2018, ທີ່ນະຄອນຫຼວງວຽງຈັນ: ກະຊວງແຜນການ ແລະ ການລົງທຶນ ໂດຍຮ່ວມມືກັບ ອົງການສະຫະປະຊາຊາດເພື່ອການພັດທະນາ ໄດ້ຈັດກອງປະຊຸມທົບທວນປະຈໍາປີ “ແຜນງານສະໜັບສະໜູນໃຫ້ແກ່ ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການຕ່າງປະເທດໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ **VIII** ເພື່ອນໍາພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ, ກ້າວຂຶ້ນໄປຢູ່ໃນປະເທດທີ່ມີລາຍຮັບປານກາງ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ (2017-2021)” ທີ່ກະຊວງແຜນການ ແລະການລົງທຶນ.

ກອງປະຊຸມດັ່ງກ່າວໄດ້ຮັບກຽດເປັນປະທານໂດຍ ທ່ານ ປອ ກິແກ້ວ ຈັນທະບູຣີ, ຮອງລັດຖະມົນຕີກະຊວງແຜນການ ແລະການລົງທຶນ, ແລະ ເປັນປະທານຮ່ວມໂດຍ ທ່ານ ນ.ຄາຣີນາ ອິມໂມເນັນ, ຜູ້ປະສານງານຂອງອົງການສະຫະປະຊາຊາດ ທັງເປັນ ຜູ້ຕາງໜ້າຂອງອົງການສະຫະປະຊາຊາດເພື່ອການພັດທະນາ ປະຈໍາ ສປປ ລາວ. ກອງປະຊຸມໄດ້ມີ ຜູ້ເຂົ້າຮ່ວມ ຈາກບັນດາກະຊວງຂະແໜງການທີ່ກ່ຽວຂ້ອງ ໂດຍສະເພາະ ຫົວໜ້າກອງເລຂາໜ່ວຍງານຂະແໜງການ ແລະຕາງໜ້າຂອງຄູ່ຮ່ວມພັດທະນາ ທັງໝົດ 50 ກວ່າທ່ານ.

ຈຸດປະສົງຕົ້ນຕໍຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອທົບທວນຄືນ ແລະ ລາຍງານຄວາມຄືບໜ້າ, ຜົນສໍາເລັດ ແລະ ສິ່ງທ້າທາຍ ທີ່ຕິດພັນກັບການຈັດຕັ້ງປະຕິບັດແຜນງານໃນໄລຍະປີ 2017 ທີ່ຜ່ານມາ ເຊິ່ງເປັນແຜນງານທີ່ໄດ້ຮັບທຶນສະໜັບສະໜູນຈາກ ລັດຖະບານລຸກຊໍາບວກ ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ ໃຫ້ແກ່ກະຊວງແຜນການ ແລະ ການລົງທຶນ, ແລະ ກະຊວງການຕ່າງປະເທດ ເພື່ອການບັນລຸເປົ້າໝາຍໃນການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ, ການກ້າວຂຶ້ນໄປຢູ່ໃນປະເທດທີ່ມີລາຍຮັບປານກາງ ແລະ ບັນລຸເປົ້າໝາຍ ການພັດທະນາແບບຍືນຍົງ. ພ້ອມນີ້ ກອງປະຊຸມຍັງຊຸມໃສ່ຕົກລົງເຫັນດີເປັນເອກະພາບກັນລະຫວ່າງຄະນະຜູ້ບໍລິຫານແຜນງານ ເພື່ອຮັບຮອງເອົາແຜນວຽກປະຈໍາປີ 2018.



ໃນກອງປະຊຸມອັນສຳຄັນໃນຄັ້ງນີ້, ທ່ານ ປອ ກິແກ້ວ ຈັນທະບູຣີ, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໄດ້ເນັ້ນໜັກເຖິງຄວາມສຳຄັນ, ຜົນສຳເລັດ ແລະ ບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດແຜນງານໃນປີທີ່ຜ່ານມາ ໂດຍທ່ານໄດ້ກ່າວວ່າ: "ຈຸດປະສົງຫຼັກຂອງແຜນງານຄັ້ງໃໝ່ນີ້ແມ່ນເພື່ອສ້າງ ແລະ ເພີ່ມທະວີຄວາມເຂັ້ມແຂງໃຫ້ແກ່ພະນັກງານກໍ່ຄື ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ **VIII** ເພື່ອນຳພາປະເທດຊາດໃຫ້ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ, ກ້າວໄປສູ່ປະເທດທີ່ມີລາຍຮັບປານກາງ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ. ສະນັ້ນ, ໃນການຕິດຕາມກວດກາ ແລະ ລາຍງານການຈັດຕັ້ງປະຕິບັດແຜນງານ ພວກເຮົາຈະຕ້ອງໄດ້ສຸມໃສ່ຜົນໄດ້ຮັບ ແລະ ໝາກຜົນຂອງແຜນງານ".

ທ່ານ ຍັງໄດ້ກ່າວເຖິງບູລິມະສິດຂອງລັດຖະບານທີ່ຈະຕ້ອງໄດ້ຈັດຕັ້ງປະຕິບັດໃນປີ 2018 ໂດຍລວມມີ ການຈັດປີທ່ອງທ່ຽວລາວ, ການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ **VIII** ກໍ່ຄືການກະກຽມໃສ່ການປະເມີນສະຖານະພາບດ້ອຍພັດທະນາ ແລະ ການສ້າງບົດລາຍງານເປົ້າໝາຍການພັດທະນາແບບຍືນຍົງແບບສະໝັກໃຈ ເຊິ່ງຈະໄດ້ນຳໄປລາຍງານທີ່ກອງປະຊຸມປຶກສາຫາລະດັບສູງກ່ຽວກັບເປົ້າໝາຍການພັດທະນາແບບຍືນຍົງໃນເດືອນ ກໍລະກົດ ປີ 2018. ພ້ອມນັ້ນ, ລັດຖະບານ ຍັງຈະໄດ້ປະເມີນການຈັດຕັ້ງປະຕິບັດຖະແຫຼງການວຽງຈັນ ເພື່ອກະກຽມໃສ່ການສຳຫຼວດລະດັບໂລກກ່ຽວກັບ ການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ ຄັ້ງທີ 3, ການກະກຽມສ້າງບົດລາຍງານການພັດທະນາມະນຸດແຫ່ງຊາດ ແລະ ການສຳເລັດການສຳຫຼວດລະດັບຊາດຕ່າງໆ ເປັນຕົ້ນ ການສຳຫຼວດແຮງງານ, ການສຳຫຼວດດັດສະນີໝາຍສັງຄົມລາວ ແລະ ອື່ນໆ ເພື່ອປະກອບຂໍ້ມູນໃຫ້ແກ່ການຕິດຕາມກວດກາ ແລະ ລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນການພັດທະນາໃນລະດັບຊາດ.

ເພື່ອບັນລຸບັນດາບູລິມະສິດຂ້າງເທິງນີ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ, ທ່ານ ປອ ກິແກ້ວ ຈັນທະບູຣີ ໄດ້ເນັ້ນໜັກເຖິງການເພີ່ມທະວີເອົາໃຈໃສ່ໃນດ້ານການປະສານງານກັນລະຫວ່າງພາກສ່ວນທີ່ກ່ຽວຂ້ອງ, ການຮັບປະກັນໃຫ້ມີການສ້າງ, ຕິດຕາມກວດກາ ແລະ ຈັດຕັ້ງປະຕິບັດງົບປະມານຢ່າງຮັດກຸມ, ເພີ່ມທະວີການຮ່ວມມືກັນກັບຕ່າງປະເທດເພື່ອຈັດຕັ້ງປະຕິບັດແຜນງານນີ້ໃຫ້ສຳເລັດຜົນ ໂດຍການລະດົມທຶນຈາກການຮ່ວມມືແບບໃຕ້-ໃຕ້, ການຮ່ວມມືກັບພາກເອກະຊົນ ແລະ ຄູ່ຮ່ວມອື່ນໆທີ່ກ່ຽວຂ້ອງ, ເຊິ່ງໃນບາງຕອນທ່ານ ປອ ກິແກ້ວ ໄດ້ກ່າວວ່າ: "ພວກເຮົາຕ້ອງໄດ້ຊອກຫາແຫຼ່ງທຶນໃໝ່ ແລະ ກຳນົດວິທີໃນການໃຫ້ການສະໜັບສະໜູນຈາກຕ່າງປະເທດຮ່ວມກັນກັບຄູ່ຮ່ວມພັດທະນາ. ສະນັ້ນ, ໃນໄລຍະ 5 ປີ ແຫ່ງການຈັດຕັ້ງປະຕິບັດແຜນງານນີ້, ພວກເຮົາຈະຕ້ອງໄດ້ເອົາໃຈໃສ່ລະດົມທຶນຮອນຈາກຄູ່ຮ່ວມພັດທະນາຢ່າງມີຍຸດທະສາດ ແລະ ສົມເຫດສົມຜົນ".




ໃນໂອກາດນີ້, ທ່ານ ນ.ຄາຣີນາ ອິມໂມເນັນ, ຜູ້ຕາງໜ້າຂອງອົງການສະຫະປະຊາຊາດເພື່ອການພັດທະນາ ໄດ້ເນັ້ນໃຫ້ເຫັນເຖິງຜົນສຳເລັດຂອງແຜນງານ ເຊິ່ງສະແດງອອກໃນການຈັດກອງປະຊຸມໂຕະມົນປະຈຳປີ 2017 ທີ່ໄດ້ຈັດຂຶ້ນທີ່ແຂວງຈຳປາສັກ ໃນທ້າຍປີ 2017 ທີ່ຜ່ານມາ ເຊິ່ງໄດ້ຮັບສຽງຕອບຮັບທີ່ດີຫຼາຍຈາກຜູ້ເຂົ້າຮ່ວມ; ພ້ອມນັ້ນ, ກໍ່ໄດ້ກ່າວເຖິງຄວາມສຳຄັນຂອງການເພີ່ມທະວີການຮ່ວມມືກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງເພື່ອບັນລຸຈຸດປະສົງຂອງແຜນງານຕາມທີ່ກຳນົດໄວ້ວ່າ: "ກອງປະຊຸມໃນມື້ນີ້ ຖືເປັນໂອກາດອັນດີທີ່ຂ້າພະເຈົ້າຢາກເນັ້ນໜັກເຖິງການຈັດກອງປະຊຸມໂຕະມົນປະຈຳປີທີ່ແຂວງຈຳປາສັກ ເຊິ່ງໄດ້ບັນລຸຕາມຄາດໝາຍທີ່ກຳນົດໄວ້ຢ່າງຈົບງາມ ແລະ ເຫັນວ່າມີການປັບປຸງດີຂຶ້ນໃນທຸກໆປີ ອີງໃສ່ຄຳຍ້ອງຍໍສັນລະເສີນຈາກຜູ້ເຂົ້າຮ່ວມກອງປະຊຸມ. ພິເສດໃນປີ 2018 ນີ້, ພວກເຮົາກໍ່ໄດ້ວາງແຜນຈະຈັດ "ກອງປະຊຸມໂຕະມົນລະດັບສູງເປັນວາລະພິເສດ" ເຊິ່ງ ທ່ານ ອາຈິມ ສະເຕນເນີ, ຜູ້ບໍລິຫານງານຈາກຫ້ອງການສະຫະປະຊາຊາດເພື່ອການພັດທະນາ ປະຈຳສຳນັກງານໃຫຍ່ ກໍ່ໄດ້ຕອບຮັບຢ່າງບໍ່ເປັນທາງການທີ່ຈະເຂົ້າຮ່ວມ. ສະນັ້ນ, ພວກເຮົາຈະຕ້ອງໄດ້ເອົາໃຈໃສ່ຂະຫຍາຍການຮ່ວມມືກັບຫຼາຍພາກສ່ວນ ເປັນຕົ້ນກັບພາກເອກະຊົນ ແລະ ຕ່າງປະເທດ ໂດຍເລີ່ມຈາກບັນດາປະເທດທີ່ຢູ່ໃນພາກພື້ນດຽວກັນ ຜ່ານການຮ່ວມມືແບບໃຕ້-ໃຕ້ ແລະ ການຮ່ວມມືສາມຫຼ່ຽມ".

ກອງປະຊຸມຄັ້ງນີ້ ໄດ້ດຳເນີນໄປດ້ວຍຄວາມສ້າງສັນ ແລະ ປິດລົງໃນຕອນທ່ຽງຂອງມື້ດຽວກັນ.

---

**ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:**
ທ່ານ ມໍລະກົດ ວົງໄຊ, ຫົວໜ້າພະແນກອົງການຈັດຕັ້ງສາກົນ, ກົມຮ່ວມມືສາກົນ, ກຜທ
ອີເມວ: k_vongxay@hotmail.com
ໂທ: 856-21-222214
ມືຖື: (+856 20) 2244 8892

ນ. ວີນາ ໂງ່ນວໍຣະຣາດ
ພະນັກງານລະດັບອາວຸໂສດ້ານການສື່ສານ ແລະ ສະໜັບສະໜູນດ້ານວິຊາການໃຫ້ແກ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII,
ກົມຮ່ວມມືສາກົນ, ກຜທ
ອີເມວ: venang@gmail.com
ໂທ: (+856 21) 222 925
ມືຖື: (+856 20) 7786 3939